ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

ກະຊວງການເງິນ

ກົມພາສີ

ເລກທີ:..06893../ກພສ

ນະຄອນຫຼວງວຽງຈັນ, ວັນທີ: 2 9 MAY 2013

# ແຈ້ງການແນະນຳ

**ເຖິງ : ຫົວໜ້າ ດ່ານພາສີສາກົນ ໃນທົ່ວປະເທດ.**

**ເລື່ອງ : ເງື່ອນໄຂໃນການອອກເອກະສານຄໍ້າປະກັນເອົາສິນຄ້າອອກຈາກດ່ານ ( IM8 )**

- ອີງຕາມ ກົດໝາຍວ່າດ້ວຍພາສີ ສະບັບເລກທີ 04/ສພຊ, ລົງວັນທີ 20 ທັນວາ 2011.

ໄລຍະຜ່ານມາສັງເກດເຫັນໄດ້ວ່າ ການອະນຸຍາດເອກະສານການຄໍ້າປະກັນ ( IM8 ) ເອົາສິນຄ້າອອກຈາກດ່ານພາສີຊາຍແດນ ຂອງບັນດາຫົວໜ້າດ່ານ, ຄະນະດ່ານ ຍັງບໍ່ທັນໄດ້ເອົາໃຈໃສ່ປະຕິບັດຕາມກົດໝາຍວ່າດ້ວຍພາສີ ສະບັບເລກທີ: 04/ສພຊ, ລົງວັນທີ: 20 ທັນວາ 2011 ມາດຕາ 27 ທີ່ກຳນົດໄວ້ ເຮັດໃຫ້ມີເອກະສານຄໍ້າປະກັນ ( IM8 ) ຄ້າງຊຳລະໂດຍບໍ່ໄດ້ມີການເລັ່ງທວງ ແລະ ສະຫຼຸບລາຍງານໃຫ້ຂັ້ນເທິງຮັບຊາບ ເກີດມີໜີ້ສິນທີ່ຄ້າງມອບເຂົ້າງົບປະມານເປັນຈຳນວນຫຼາຍ ເຮັດໃຫ້ການຈັດເກັບລາຍຮັບບໍ່ໄດ້ຕາມແຜນການ.

ສະນັ້ນ ເພື່ອເປັນການຫຼຸດຜ່ອນໃນການອອກເອກະສານຄໍ້າປະກັນ ( IM8 ) ເອົາສິນຄ້າອອກຈາກດ່ານ ໃຫ້ສອດຄ່ອງກັບ ກົດໝາຍວ່າດ້ວຍພາສີ ແລະ ຈັດຕັ້ງປະຕິບັດໃຫ້ມີຄວາມເປັນເອກະພາບ ໃນທົ່ວປະເທດ.

**ກົມພາສີ ຈຶ່ງອອກແຈ້ງການແນະນຳ ດັ່ງນີ້:**

1. ມອບໃຫ້ດ່ານພາສີສາກົນຕິດປະກາດ ຫຼື ໂຄສະນາເຜີຍແຜ່ ໃຫ້ສັງຄົມຮັບຮູ້ ໃນການຈັດຕັ້ງປະຕິບັດ ກົດໝາຍວ່າດ້ວຍພາສີ ມາດຕາ 29 ກ່ຽວກັບການແຈ້ງພາສີກ່ອນສິນຄ້າ, ເຄື່ອງຂອງ ມາຮອດດ່ານພາສີຊາຍແດນ;
2. ເຫັນດີໃຫ້ຫົວໜ້າດ່ານ, ຄະນະດ່ານ ອອກອະນຸຍາດເອກະສານຄໍ້າປະກັນ ( IM8 ) ເອົາສິນຄ້າອອກດ່ານມີຄື: ສັດທີ່ມີຄວາມສ່ຽງຕໍ່ຄວາມຕາຍ, ສິນຄ້າບູດເນົ່າໄວ, ວັດຖຸເຄມີທີ່ເປັນອັນຕະລາຍຕໍ່ສຸຂະພາບ, ນໍ້າມັນເຊື້ອໄຟ, ສິນຄ້າຂອງອົງການຈັດຕັ້ງສາກົນ ແລະ ສະຖານທູດທີ່ມີຄວາມຈຳເປັນບາງປະເພດ ( ໃນກໍລະນີທີ່ມີສະໂນດນຳສົ່ງ ຈາກກະຊວງການຕ່າງປະເທດ ແມ່ນໃຫ້ປະກອບໃບແຈ້ງພາສີເປັນລາຍລະອຽດ ອອກເລີຍ ).

3. ສິນຄ້ານຳເຂົ້າໃນຮູບການລົງທຶນຂັ້ນສູນກາງ ຖ້າມີແຜນຮັບຮອງແລ້ວ ແມ່ນໃຫ້ປະກອບໃບແຈ້ງພາສີເປັນລາຍລະອຽດອອກໄດ້ ພ້ອມທັງຫັກລົບແຜນຕາມແຈ້ງການ ຂອງກົມພາສີ ສະບັບເລກທີ: 05928/ກພສ, ລົງວັນທີ: 19 ເມສາ 2013, ຖ້າບໍ່ມີແຜນນຳເຂົ້າຕ້ອງມີໜັງສືທາງລັດຖະການຂອງກົມພາສີ ຈຶ່ງສາມາດອອກເອກະສານຄ້ຳປະກັນໄດ້.
4. ການນຳເຂົ້າສິນຄ້າ, ເຄື່ອງຂອງ ຕາມກົດໝາຍການລົງທຶນຂັ້ນທ້ອງຖິ່ນ ຖ້າມີແຜນຮັບຮອງຂັ້ນທ້ອງຖິ່ນໃຫ້ປະກອບເອກະສານໃບແຈ້ງພາສີເປັນລາຍລະອຽດ ແລະ ຫັກລົບແຜນການ ຕາມແຈ້ງການຂອງກົມພາສີ ສະບັບເລກທີ: 05928/ກພສ, ລົງວັນທີ: 19 ເມສາ 2013.

   ໃນກໍລະນີ ບໍ່ມີແຜນນຳເຂົ້າ ສຳລັບສິນຄ້າທົ່ວໄປ ແມ່ນໃຫ້ມີເອກະສານຢັ້ງຢືນຈາກຂະແໜງການກ່ຽວຂ້ອງກ່ອນ ຈຶ່ງອະນຸຍາດອອກເອກະສານຄ້ຳປະກັນໄດ້ ແຕ່ສູງສຸດບໍ່ໃຫ້ເກີນ 03 ຄັ້ງ;

   ສະເພາະປະເພດພາຫະນະມາຮັບໃຊ້ທາງກິງ ຕ້ອງໄດ້ມີໜັງສືທາງລັດຖະການຂອງກົມພາສີ ຈຶ່ງສາມາດນຳເຂົ້າໄດ້;
5. ຫ້າມເດັດຂາດບໍ່ໃຫ້ຫົວໜ້າດ່ານ, ຄະນະດ່ານ ອະນຸຍາດອອກເອກະສານຄ້ຳປະກັນ ( IM8 ) ຕາມທີ່ໄດ້ລະບຸໄວ້ຂ້າງເທິງນີ້. ໃນກໍລະນີຈຳເປັນໃຫ້ຂໍທິດຊີ້ນຳຈາກກົມພາສີກ່ອນຈຶ່ງອະນຸຍາດໄດ້;
6. ມອບໃຫ້ຫົວໜ້າດ່ານສະຫຼຸບຄືນ ເອກະສານຄ້ຳປະກັນທີ່ໄດ້ອອກໃນໄລຍະຜ່ານມາ ເພື່ອເລັ່ງທວງໃນການຈັດເກັບລາຍຮັບເຂົ້າງົບປະມານ ໃຫ້ໄດ້ຕາມແຜນການພ້ອມທັງລາຍງານໃຫ້ກົມພາສີຮັບຊາບ ເອກະສານຄ້ຳປະກັນ ( IM8 ) ຄ້າງທັງໝົດຜ່ານມາ ຄ່າພາສີ-ພັນທະອື່ນໆທີ່ຍັງຄ້າງ.

ດັ່ງນັ້ນ, ຈຶ່ງແຈ້ງມາຍັງດ່ານ ເພື່ອຮັບຊາບ ແລະ ພ້ອມກັນຈັດຕັ້ງປະຕິບັດຢ່າງເຂັ້ມງວດ

**ຫົວໜ້າກົມພາສີ**

ວາດສະພັງທອງ ສີພັນດອນ

...thsaphangthong SIPHANDON